ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

<u>ອົງການອະທິໄອຍະການ</u> /ລກທີ <u>16</u> /ອທກ.

<u>ປະຊາຊົນແຫ່ງ ສປປລ.</u>

<u>ຄຳ ສັ່ງ ແນະ ນຳ</u>

ເຖິງ ບັນດາໄອຍະການປະຊາຊົນແຂວງ, ກຳແພງນະຄອນແລະເມືອງ ໃນທົ່ວປະເທດ.

<u>ເລື່ອງ</u>: ການບໍ່ດຳເນີນຄະດີອາຍາແລະການໄກ່ເກັ່ຍຄວາມໃນຄະດີແພ່ງຕາມ ມາດຕາ 53 ແລະ 54 ກົດໝາຍດຳເນີນຄະດີແພ່ງ.

ໄດ້ສັງເກດເຫັນວ່າໄອຍະການປະຊາຊົນ, ອົງການສືບສວນ-ສອບສວນແລະນາຍບ້ານ ໄດ້ທຳການໄກ່ເກັ່ຍຄວາມກໍລະນີບຸກຄົນທີ່ກະທຳຜິດທາງອາຍາທີ່ກໍ່ຄວາມເສຍຫາຍຫລາຍແກ່ສັງຄົມນັ້ນເປັນການລະເມີດກົດໝາຍດຳເນີນຄະດີອາຍາ. ໄອຍະການແລະອົງການສືບສວນ-ສອບສວນ ຈະບໍ່ດຳເນີນຄະດີອາຍາໄດ້ສະເພາະແຕ່ກໍລະນີທີ່ໄດ້ກຳນົດໄວ້ໃນກົດໝາຍເທົ່ານັ້ນ. ມາດຕາ 6 ກົດໝາຍອາຍາໄດ້ບົ່ງໄວ້ວ່າການກະທຳຜິດທາງອາຍາທີ່ກໍ່ຄວາມເສຍຫາຍພຽງເລັກໜ້ອຍກໍ່ຈະບໍ່ຖືວ່າເປັນການກະທຳຜິດທາງອາຍາເຊັ່ນ ການລັກເລັກນ້ອຍ ໃນມູນຄ່ານ້ອຍແລະອື່ນໆ. ນອກຈາກນີ້ການກະທຳຜິດທາງອາຍາທີ່ຈຳເປັນຕ້ອງມີຄຳຮ້ອງຟ້ອງຂອງຜູ້ຖືກເສຍຫາຍທີ່ໄດ້ກຳນົດໄວ້ໃນມາດຕາ 22 ກົດໝາຍອາຍາຄື ການທຳຮ້າຍຮ່າງກາຍລະຫວ່າງຍາດໃກ້ຊິດທີ່ບໍ່ມີບາດເຈັບສາຫັດຫລືບໍ່ເສຍອົງຄະ, ການນິນທາ, ການໃສ່ຮ້າຍ, ການປ້ອຍດ່າ, ການໝິ່ນປະໝາດຊາກສົບຫລືຊື່ສຽງຂອງຜູ້ຕາຍ, ການກະທຳຜິດຕໍ່ກຳມະສິດສ່ວນຕົວຂອງຍາດໃກ້ຊິດ, ການທຳໃຫ້ເສຍຈານ, ການລ່ວງລະເມີດເຄຫາສະຖານແລະການລະເມີດຄວາມລັບສ່ວນຕົວ. ໃນເກົ້າການກະທຳຜິດທີ່ກ່າວມາເທິງນີ້ ຖ້າບໍ່ມີຄຳຮ້ອງຟ້ອງຂອງຜູ້ຖືກເສຍຫາຍແລ້ວ ໄອຍະການແລະເຈົ້າໜ້າທີ່ສືບສວນ-ສອບສວນ ຈະດຳເນີນຄະດີຕໍ່ຜູ້ກະທຳຜິດດ້ວຍສິດອຳນາດຂອງຕົນເອງບໍ່ໄດ້ ໝາຍຄວາມວ່າຖ້າບໍ່ມີຄຳຮ້ອງຟ້ອງຂອງຜູ້ຖືກເສຍຫາຍແລ້ວການກະທຳດັ່ງກ່າວກໍບໍ່ເປັນການກະທຳຜິດທາງອາຍາແຕ່ຢ່າງໃດ. ຖ້າວ່າໃນເບື້ອງຕົ້ນມີຄຳຮ້ອງຟ້ອງຂອງຜູ້ຖືກເສຍຫາຍພາໃຫ້ມີການດຳເນີນຄະດີ ແຕ່ໃນເວລາຕໍ່ມາຜູ້ຖືກເສຍຫາຍໄດ້ຖອນຄຳຮ້ອງຟ້ອງກໍເປັນເຫດໃຫ້ການດຳເນີນຄະດີນັ້ນຍຸດຕິລົງ. ໃນກໍລະນີການກະທຳຜິດທີ່ກ່າວໄວ້ໃນມາດຕາ 22 ກົດໝາຍອາຍານີ້ໄອຍະການ, ເຈົ້າໜ້າທີ່ສືບສວນ-ສອບສວນແລະນາຍບ້ານຈະສຶກສາອົບຮົມໃຫ້ຄູ່ຄວາມຄືນດີກັນກໍໄດ້. ອີງຕາມມາດຕາ 53ແລະ54 ກົດໝາຍດຳເນີນຄະດີແພ່ງນາຍບ້ານຈະທຳການໄກ່ເກັ່ຍຄູ່ຄວາມທີ່ຂັດແຍ່ງກັນກ່ຽວກັບບັນຫາໃນສະຖານແພ່ງກ່ອນການຍື່ນຄຳຮ້ອງຟ້ອງຂຶ້ນສານກໍໄດ້ ຕາມຄຳຮ້ອງຂໍຂອງຄູ່ຄວາມຝ່າຍໃດຝ່າຍນຶ່ງ. ຄະດີແພ່ງໃນທີ່ນີ້ກວມທັງຄະດີຄອບຄົວ, ໃນກໍລະນີມີການຂັດແຍ່ງກັນຢູ່ໃນຄອບຄົວ ນາຍບ້ານຈະອົບຮົມໃຫ້ຜົວເມຍຄືນດີກັນກໍໄດ້. ຖ້າຫາກຄູ່ຜົວເມຍບໍ່ສາມາດຄືນດີກັນໄດ້ແລ້ວຝ່າຍໃດຝ່າຍນຶ່ງກໍຕ້ອງຍື່ນຄຳຮ້ອງຂໍຢ່າຮ້າງຕໍ່ສານປະຊາຊົນຕາມມາດຕາ 21 ກົດໝາຍຄອບຄົວ. ນາຍບ້ານມີສິດແຕ່ສຶກສາອົບຮົມໃຫ້ຄູ່ຜົວເມຍຖືກຕ້ອງປອງດອງກັນເທົ່ານັ້ນ ແຕ່ບໍ່ມີສິດອົບຮົມໃຫ້ຄູ່ຜົວເມຍຢ່າຮ້າງກັນເພາະນາຍບ້ານບໍ່ມີສິດຈະຕັດສິນໃຫ້ຜົວເມຍຢ່າຮ້າງກັນ. ການຕັດສິນຂອງນາຍບ້ານໃຫ້ຜົວເມຍຢ່າຮ້າງກັນນັ້ນຖືວ່າເປັນໂມຄະໃຊ້ການບໍ່ໄດ້,